# ສິດຄອບຄອງນຳໃຊ້ຕາມປະເພນີ ຢູ່ ສປປ ລາວ

## ບົດສັງລວມຫຍໍ້

ເດືອນທັນວາ 2021



*ຮູບພາບ: ພູມີທັດຂອງບ້ານໃນເຂດຫ່າງໄກສອກຫລີກ ໃນເມືອງຫົວເມືອງ, ແຂວງຫົວພັນ (ພາບຖ່າຍໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ)*

## ປະເດັນ

ໃນຂະນະທີ່ ລັດຖະບານສປປ ລາວ ມີຄວາມຄືບໜ້າໃນການອອກໃບຕາດິນໃຫ້ຜູ້ໄດ້ຮັບສິດນຳໃຊ້ທີ່ດິນໃນທົ່ວປະເທດ, **ຊາວກະສິກອນໃນເຂດຊົນນະບົດສ່ວນໃຫຍ່ ຍັງບໍ່ມີເອກະສານສິດຄອບຄອງນຳໃຊ້ທີ່ດິນຢ່າງເປັນທາງການ.** ການຄອບຄອງນຳໃຊ້ທີ່ດິນຂອງເຂົາເຈົ້າ ມັກຈະເປັນສ່ວນໜຶ່ງຂອງລະບົບການຄອບຄອງນຳໃຊ້ຕາມປະເພນີ ໂດຍອີງໃສ່ປະເພນີ ແລະ ຂໍ້ຕົກລົງພາຍໃນຊຸມຊົນ. ສິດຄອບຄອງນຳໃຊ້ທັງສ່ວນບຸກຄົນ ແລະ ລວມໝູ່ (ທີ່ເຂົ້າໃຈທົ່ວໄປວ່າ "ເປັນຂອງຊຸມຊົນ") ແມ່ນສ່ວນໜຶ່ງຂອງລະບົບການຄອບຄອງນຳໃຊ້ຕາມປະເພນີ ເຊິ່ງມີຄວາມຫຼາກຫຼາຍ ແລະ ຂຶ້ນກັບທ້ອງຖິ່ນ. ເນື່ອງຈາກຂາດການຄົ້ນຄ້ວາ ແລະ ຂໍ້ມູນບໍ່ພຽງພໍ, ລະບົບເຫຼົ່ານີ້ຍັງບໍ່ທັນເປັນທີ່ເຂົ້າໃຈດີ, ດັ່ງນັ້ນ ຈຶ່ງມີຊ່ອງຫວ່າງ ແລະ ຄວາມສັບສົນທາງດ້ານກົດໝາຍ ຕໍ່ກັບການຄອບຄອງນຳໃຊ້ທີ່ດິນຕາມປະເພນີ ຢູ່ ສປປ ລາວ.

ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງປີ 2019 ໃຫ້ການຮັບຮູ້ ແລະ ປົກປ້ອງການຄອບຄອງນຳໃຊ້ທີ່ດິນຕາມປະເພນີ ໃນລະດັບໃດໜຶ່ງ, ແຕ່ກໍຍັງ**ຈຳກັດ ສະເພາະສິດຄອບຄອງນຳໃຊ້ທີ່ດິນສ່ວນບຸກຄົນ** (ມາດຕາ 130 ກົດໝາຍວ່າດ້ວຍທີ່ດິນ). ກົດໝາຍດັ່ງກ່າວ ບໍ່**ໄດ້ກ່າວເຖິງການຮັບຮູ້ ແລະ ປົກປ້ອງສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີຂອງທີ່ດິນລວມໝູ່,** ປ່າຊຸມຊົນ ຫຼື ຮູບແບບອື່ນໆຂອງທີ່ດິນຕາມປະເພນີ.

ນອກເໜືອຈາກຄວາມຕັ້ງໃຈທີ່ຈະອອກໃບຕາດິນສ່ວນບຸກຄົນສຳລັບຕອນດິນທີ່ໄດ້ມາໂດຍປະເພນີ, ເຊິ່ງປະຕິບັດຕາມເງື່ອນໄຂທີ່ກຳນົດໃນມາດຕາ 130 ຂອງການນຳໃຊ້ປົກກະຕິ ທີ່ມີໄລຍະເວລາຫຼາຍກວ່າ 20 ປີ ກ່ອນທີ່ກົດໝາຍວ່າດ້ວຍທີ່ດິນມີຜົນບັງຄັບໃຊ້, ກໍບໍ່ມີການໃຫ້ລາຍລະອຽດເພີ່ມເຕີມກ່ຽວກັບ **ວິທີການຕົວຈິງໃນການຮັບຮູ້ ແລະ ການປົກປ້ອງສິດຕາມປະເພນີ** ວ່າຄວນປະຕິບັດຄືແນວໃດ. ກົດໝາຍດັ່ງກ່າວພາໃຫ້ມີຄຳຖາມຕື່ມອີກວ່າ **ສິດຕາມປະເພນີຕໍ່ທີ່ດິນທີ່ໄດ້ເກີດມີຂຶ້ນເມື່ອບໍ່ດົນມານີ້ ທີ່ຍັງບໍ່ເຖິງ 20 ປີເດ ຈະຖືກປະຕິບັດແນວໃດ** ອັນໄດ້ເຮັດໃຫ້ເນື້ອທີ່ດິນ ແລະ ຊຸມຊົນຈຳນວນຫຼາຍ ບໍ່ຖືກຮັບຮູ້ສິດຄອບຄອງນຳໃຊ້ທີ່ດິນ. ກົດໝາຍທີ່ດິນ **ບໍ່ໄດ້ໃຫ້ການຊີ້ນຳກ່ຽວກັບເຄື່ອງມື ແລະ ຂະບວນການທີ່ຈະນຳໃຊ້** ເພື່ອຮັບປະກັນການຮັບຮູ້ສິດຕາມປະເພນີ, ເຊັ່ນດຽວກັນກັບ ການປົກປ້ອງສິດໃນກໍລະນີທີ່ມີຂໍ້ຂັດແຍ້ງເກີດຂຶ້ນ.

ໃນຂະນະທີ່ແຜນນຳໃຊ້ທີ່ດິນທ້ອງຖິ່ນ ບາງຄັ້ງສາມາດສະໜອງແຫຼ່ງຂໍ້ມູນກ່ຽວກັບທີ່ຕັ້ງ ແລະ ຂອບເຂດຂອງທີ່ດິນຕາມປະເພນີ, ແຕ່ຄວາມໜ້າເຊື່ອຖືຂອງຂໍ້ມູນດັ່ງກ່າວ ແມ່ນຂຶ້ນກັບຄຸນນະພາບ ແລະ ລັກສະນະຂອງການມີສ່ວນຮ່ວມໃນຂະບວນການສ້າງແຜນທີ່ເຫຼົ່ານັ້ນ ເຊິ່ງໂດຍທົ່ວໄປພົບວ່າມີຄວາມບໍ່ເປັນເອກະພາບ ແລະ ມັກຈະຂຶ້ນກັບການສະໜັບສະໜູນຈາກພາຍນອກ. ນອກຈາກມີສະຖານະພາບທາງດ້ານກົດໝາຍທີ່ຕ່ຳແລ້ວ, **ແຜນນຳໃຊ້ທີ່ດິນໃນປັດຈຸບັນ ຍັງບໍ່ມີສະຖານະພາບພຽງພໍທີ່ຈະປົກປ້ອງສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີຢ່າງມີປະສິດທິຜົນ.** ຍັງ**ບໍ່ມີຂໍ້ບັງຄັບທາງດ້ານກົດໝາຍທີ່ກຳນົດໃຫ້ບັນດາໂຄງການພັດທະນາ ຫຼື ການລົງທຶນລັກສະນະໃດໆກໍຕາມ ດຳເນີນການຊອກຫາຂໍ້ມູນກ່ຽວກັບການຄອບຄອງນຳໃຊ້ທີ່ດິນຢ່າງລະອຽດ** ເພື່ອກຳນົດສິດຕໍ່ທີ່ດິນທັງໝົດຂອງຊຸມຊົນ ບໍ່ວ່າຈະເປັນສິດຕາມປະເພນີ ຫຼື ສິດທີ່ເປັນທາງການ, ລວມໝູ່ ຫຼື ສ່ວນບຸກຄົນ.

ສຳລັບທີ່ດິນສາມປະເພດປ່າຂອງລັດ[1], ກົດໝາຍວ່າດ້ວຍທີ່ດິນ ທີ່ອ້າງອີງໃນມາດຕາທີ 44 ກ່ຽວກັບ ການຮັບຮູ້ສິດຕໍ່ທີ່ດິນຂອງປະຊາຊົນທີ່ອາໃສ ແລະ ດຳລົງຊີວິດຢູ່ໃນທີ່ດິນປ່າໄມ້ ໂດຍຜ່ານການອອກໃບຢັ້ງຢືນການນຳໃຊ້ທີ່ດິນ. ແຕ່ຍັງບໍ່ຈະແຈ້ງວ່າ **ການຮຽກຮ້ອງສິດຕາມປະເພນີພາຍໃນທີ່ດິນປ່າໄມ້ຂອງລັດ ທີ່ປະຕິບັດໄດ້ຕາມເງື່ອນໄຂຂອງມາດຕາ 130 ຍັງຈະຕ້ອງມີການອອກໃບຕາດິນ ຫຼື ບໍ່.** ກົດໝາຍວ່າດ້ວຍປ່າໄມ້ສະບັບປັບປຸງປີ 2019 **ບໍ່ໄດ້ກ່າວເຖິງສິດຄອບຄອງນຳໃຊ້ຕື່ມອີກ**, ໂດຍກຳນົດພຽງແຕ່ "ການນຳໃຊ້ຊັບພະຍາກອນປ່າໄມ້ຕາມປະເພນີ" (ມາດຕາ 60, 64 ແລະ 123). ເຖິງວ່າໂດຍທົ່ວໄປແລ້ວ ກະຊວງກະສິກຳ ແລະ ປ່າໄມ້ (ກປ) ຈະຮັບຮູ້ຄວາມຮັບຜິດຊອບຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ໃນການຂຶ້ນທະບຽນສິດຕໍ່ທີ່ດິນ ແລະ ການອອກເອກະສານການຄອບຄອງນຳໃຊ້ທີ່ດິນຢ່າງເປັນທາງການ[2], ແຕ່ໜ້າທີ່ຂອງ ກປ ແມ່ນຄຸ້ມຄອງ ແລະ ຊີ້ນຳນຳພາວຽກງານຄຸ້ມຄອງທີ່ດິນປ່າໄມ້ ຈຶ່ງມີ**ຄວາມຈຳເປັນທີ່ຈະຕ້ອງມີຄວາມເປັນເອກະພາບກັນທາງດ້ານ ຄວາມເຂົ້າໃຈ, ວິທີການ ແລະ ການຕົກລົງກັນລະຫວ່າງ ກປ ແລະ ກຊສ ກ່ຽວກັບວິທີການກຳນົດ ແລະ ຮັບຮູ້ສິດຄອບຄອງນຳໃຊ້ທີ່ດິນຕາມປະເພນີ.**



*ຮູບພາບ: ຊາວກະສິກອນກຸ່ມໜຶ່ງກຳລັງຟາດເຂົ້າ ໃນເມືອງງອຍ, ແຂວງຫລວງພະບາງ (ພາບຖ່າຍໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ)*

## ຄວາມເປັນມາ

ການຄອບຄອງນຳໃຊ້ທີ່ດິນຕາມປະເພນີ ຫຼື ການຄອບຄອງຕາມປະເພນີ ແມ່ນຊຸດຂອງກົດລະບຽບ, ມາດຖານ, ສະຖາບັນ, ການປະຕິບັດ ແລະ ຂັ້ນຕອນທີ່ສ້າງຂຶ້ນໂດຍຊຸມຊົນທີ່ພັດທະນາໄປຕາມການເວລາ. ກົດລະບຽບ ແລະ ມາດຖານເຫຼົ່ານີ້ ຄຸ້ມຄອງການຈັດສັນ, ນຳໃຊ້, ເຂົ້າເຖິງ ແລະ ໂອນທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ. ການຄອບຄອງຕາມປະເພນີ ມັກຈະຖືກເອີ້ນວ່າ "ລະບົບການຄອບຄອງຕາມປະເພນີ" ເພື່ອຊີ້ໃຫ້ເຫັນເຖິງຄວາມສະຫຼັບຊັບຊ້ອນຂອງການປະຕິບັດເຫຼົ່ານີ້.

ໃນຂະນະທີ່ການຄອບຄອງນຳໃຊ້ຕາມປະເພນີ ໃນປະຊາຄົມສາກົນມີຄວາມເຂົ້າໃຈກັນດີ, ນະໂຍບາຍ ແລະ ກອບກົດໝາຍຂອງ ສປປ ລາວ ຍັງຂາດຄຳນິຍາມທີ່ຈະແຈ້ງ ຄື: ກົດໝາຍວ່າດ້ວຍທີ່ດິນ ຕີຄວາມໝາຍການຄອບຄອງນຳໃຊ້ຕາມປະເພນີ (ມາດຕາ 130) ເປັນຂະບວນການຂອງການໄດ້ມາເຊິ່ງສິດຄອບຄອງນຳໃຊ້ສ່ວນບຸກຄົນ ຜ່ານການນຳໃຊ້ທີ່ດິນເປັນປົກກະຕິ ໂດຍບໍ່ມີເອກະສານການຄອບຄອງນຳໃຊ້ຢ່າງເປັນທາງການ, ແທນທີ່ຄວນກຳນົດວ່າເປັນສິດພື້ນຖານຂອງພົນລະເມືອງລາວ. ຜ່ານການອອກໃບຕາດິນ, ການຄອບຄອງນຳໃຊ້ຕາມປະເພນີດັ່ງກ່າວ ສາມາດຫັນໄປສູ່ການຄອບຄອງນຳໃຊ້ຢ່າງເປັນທາງການ. ມາດຕາ 130 ລະບຸວ່າ *"ໃນໄລຍະທີ່ຍັງບໍ່ທັນໄດ້ຂຶ້ນທະບຽນອອກໃບຕາດິນໃຫ້ບຸກຄົນເທື່ອນັ້ນ, ລັດຮັບຮູ້ ແລະ ປົກປ້ອງສິດນຳໃຊ້ທີ່ດິນຕາມປະເພນີ [...]"*. ຈຳເປັນຈະຕ້ອງມີນິຕິກຳເພີ່ມເຕີມ ເພື່ອກຳນົດວິທີການຈັດຕັ້ງປະຕິບັດການຮັບຮູ້ ແລະ ການປົກປ້ອງສິດໃນຕົວຈິງ ໂດຍສະເພາະສຳລັບທີ່ດິນທີ່ຖືສິດຮ່ວມກັນໂດຍຊຸມຊົນ.

ໃນຊຸມຊົນຊົນນະບົດ ຢູ່ ສປປ ລາວ, ການຮຽກຮ້ອງສິດຄອບຄອງນຳໃຊ້ ໂດຍທົ່ວໄປແມ່ນໄດ້ຮັບການຮັບຮອງໂດຍ ອົງການປົກຄອງບ້ານ – *ນາຍບ້ານ* – ຮ່ວມກັບຜູ້ໄດ້ຮັບສິດນຳໃຊ້ທີ່ດິນທີ່ຢູ່ໃກ້ຄຽງ. ຮູບແບບການເປັນພະຍານໃນທ້ອງຖິ່ນນີ້ ຍັງເປັນພື້ນຖານສຳລັບການຂຶ້ນທະບຽນ ແລະ ການອອກເອກະສານການຄອບຄອງນຳໃຊ້ຢ່າງເປັນທາງການ. ແນວໃດກໍຕາມ, ກົດໝາຍຂອງລາວບໍ່ໄດ້ອະທິບາຍເຖິງສະຖານະພາບວ່າການຢັ້ງຢືນໃນທ້ອງຖິ່ນດັ່ງກ່າວ ຈະພຽງພໍບໍ່ເພື່ອປົກປ້ອງສິດຂອງຜູ້ຖືຄອງທີ່ດິນຢ່າງຄົບຖ້ວນ ໃນກໍລະນີມີການໂຕ້ແຍ້ງສິດເກີດຂຶ້ນ. ການປົກປ້ອງສິດດັ່ງກ່າວ ຈະລວມເຖິງການກຳນົດທາງດ້ານກົດໝາຍສຳລັບການຊົດເຊີຍຢ່າງເຕັມສ່ວນ ໃນກໍລະນີມີການໂອນສິດນຳໃຊ້ທີ່ດິນຄືນ. ໃນຂະນະດຽວກັນ, ຜູ້ຖືໃບຕາດິນມັກຈະຖືກປະຕິບັດຢ່າງດີ ເມື່ອປຽບທຽບກັບຜູ້ທີ່ອ້າງສິດຕາມປະເພນີທີ່ບໍ່ມີເອກະສານ.

ການຕີຄວາມໝາຍແຄບຂອງການຄອບຄອງນຳໃຊ້ຕາມປະເພນີໃນກົດໝາຍວ່າດ້ວຍທີ່ດິນ ສະແດງໃຫ້ເຫັນເຖິງຄວາມບໍ່ສະເໝີພາບ ອັນໜຶ່ງທຽບກັບຄວາມເຂົ້າໃຈຂອງສາກົນ ກ່ຽວກັບການຮັບຮູ້ສິດຄອບຄອງຕາມປະເພນີທຸກຮູບແບບ ດັ່ງທີ່ໄດ້ກຳນົດໃນ VGGT,[3] ຂໍ້ທີ 5.3.ທີ່ສະເໜີວ່າ *"ລັດຄວນຮັບປະກັນວ່າ ນະໂຍບາຍ, ກອບນິຕິກຳ ແລະ ກອບການຈັດຕັ້ງສຳລັບການປົກຄອງການຄອບຄອງນຳໃຊ້ ຕ້ອງຮັບຮູ້ ແລະ ເຄົາລົບ [...] ສິດຄອບຄອງນຳໃຊ້ຕາມປະເພນີທີ່ຖືກຕ້ອງຕາມກົດໝາຍທີ່ປະຈຸບັນຍັງບໍ່ໄດ້ຮັບການປົກປ້ອງໂດຍກົດໝາຍ."*

[1] ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ

[2] ໄດ້ລະບຸໃນບົດບັນທຶກທາງການຂອງກອງປະຊຸມແລກປ່ຽນລະຫວ່າງກະຊວງຄັ້ງວັນທີ 09.07.2021

[3] Voluntary Guidelines on the Responsible Governance of Tenure of Land, Fisheries and Forests in the Context of National Food Security
ຄູ່ມືແບບສະໝັກໃຈ ກ່ຽວກັບ ການປົກຄອງທີ່ມີຄວາມຮັບຜິດຊອບຕໍ່ກັບວຽກງານທີ່ດິນ, ການປະມົງ ແລະ ປ່າໄມ້ ໃນຂອບການຄໍ້າປະກັນສະບຽງອາຫານແຫ່ງຊາດ



*ຮູບພາບ: ໄຮ່, ເລົ່າ ແລະ ປ່າເລົ່າອ່ອນ ໃນເມືອງຫົວເມືອງ, ແຂວງຫົວພັນ (ພາບຖ່າຍໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ)*

## ຂໍ້ສະເໜີແນະນຳ

**1.** ຮ່າງນິຕິກຳລຸ່ມກົດໝາຍ ທີ່ກວມເອົາສະເພາະສິດຄອບຄອງນຳໃຊ້ຕາມປະເພນີ ແລະ ໃຫ້ຄຳນິຍາມອັນລະອຽດແກ່ຄຳວ່າ "ການຄອບຄອງນຳໃຊ້ຕາມປະເພນີ" ແລະ ຂອບເຂດຂອງສິດທີ່ຕິດພັນຕາມມາດຕະຖານສາກົນ ເຊັ່ນ: VGGT. ນິຕິກຳລຸ່ມກົດໝາຍດັ່ງກ່າວ ຄວນອະທິບາຍ ແລະ ຊີ້ແຈງ:

- o ສິດຄອບຄອງນຳໃຊ້ ທີ່ຈະໄດ້ຮັບສຳລັບທີ່ດິນຕາມປະເພນີ.
- o ຄວາມຖືກຕ້ອງຂອງສິດຄອບຄອງນຳໃຊ້ຕາມປະເພນີພາຍໃຕ້ມາດຕາ 130 ໃນເວລາໃດກໍຕາມ ເມື່ອຖືກໂຕ້ແຍ້ງ ຫຼື ຮຽກຮ້ອງໂດຍຜູ້ຖືສິດ.
- o ທີ່ດິນຕາມປະເພນີຈະຖືກຮັບຮູ້ ແລະ ປົກປ້ອງແນວໃດໃນລະຫວ່າງ ໄລຍະຊົ່ວຄາວ ກ່ອນທີ່ຈະມີການອອກໃບຕາດິນ ຫຼື ໃບຢັ້ງຢືນ.
- o ຂະບວນການ ແລະ ເອກະສານທີ່ກ່ຽວຂ້ອງກັບການຮັບຮູ້ສິດຕາມປະເພນີ.
- o ສິດຕໍ່ທີ່ດິນຕາມປະເພນີຈະຖືກຮັບຮູ້ໂດຍຜ່ານການມອບຄືແນວໃດ (ມາດຕາ 127 ກົດໝາຍທີ່ດິນ) ຖ້າຫາກວ່າ ແລະ ເມື່ອເວລາບໍ່ຄົບຕາມເງື່ອນໄຂທີ່ກຳນົດໄວ້ໃນມາດຕາ 130.
- o ຂະບວນການຮັບຮູ້ສິດຕາມປະເພນີສຳລັບທີ່ດິນລວມໝູ່, ລວມທັງບັນດາກະຊວງ ແລະ ກົມທີ່ຮັບຜິດຊອບ.
- o ການສະໜອງຄ່າຊົດເຊີຍໃຫ້ແກ່ຊຸມຊົນເມື່ອທີ່ດິນຂອງລັດທີ່ນຳໃຊ້ລວມໝູ່ ຖືກເອົາໄປນຳໃຊ້ເພື່ອຈຸດປະສົງສາທາລະນະ ຫຼື ໂຄງການລົງທຶນຂອງລັດ.
- o ມາດຕາ 44 "ການນຳໃຊ້ທີ່ດິນປ່າໄມ້" ພົວພັນກັບມາດຕາ 130 ຄືແນວໃດ.

**2.** ສ້າງບົດບັນຍັດໄວ້ ໃນນິຕິກຳ ຫຼື ບົດແນະນຳທີ່ກ່ຽວຂ້ອງ ທີ່ກຳນົດວ່າ ສຳລັບໂຄງການ ຫຼື ການຊ່ວຍເຫຼືອໃດໆ ທີ່ກ່ຽວຂ້ອງກັບວຽກງານທີ່ດິນໃນລະດັບບ້ານ ຕ້ອງມີການດຳເນີນ "ການສືບສວນ/ວິເຄາະສິດຄອບຄອງນຳໃຊ້". ການສືບສວນນີ້ແມ່ນເພື່ອກຳນົດ:

- o ຂອບເຂດກຳມະສິດທີ່ດິນຂອງບຸກຄົນ ແລະ ລວມໝູ່ໂດຍມີເອກະສານທີ່ດິນຢ່າງເປັນທາງການ.
- o ຂອບເຂດການຄອບຄອງນຳໃຊ້ທີ່ດິນຕາມປະເພນີຂອງບຸກຄົນ ແລະ ລວມໝູ່ ໂດຍບໍ່ມີເອກະສານທີ່ດິນຢ່າງເປັນທາງການ.
- o ຂອບເຂດຂອງພື້ນທີ່ນຳໃຊ້ເພື່ອການປູກຝັງໝູນວຽນແບບຍືນຍົງ ແລະ ປ່າໄມ້ບ້ານ.

ບົດສັງລວມຫຍໍ້ສະບັບນີ້ ໄດ້ສ້າງຂຶ້ນໂດຍກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ຊຶ່ງໄດ້ຮ່ວມກັນພັດທະນາຂຶ້ນໂດຍກຸ່ມທີ່ປຶກສາດ້ານກົດໝາຍທີ່ດິນ ທີ່ປະກອບມີ ທີ່ປຶກສາເອກະລາດ, ໂຄງການ ແລະ ອົງການຈັດຕັ້ງຕ່າງໆລວມມີ: ອົງການອາຫານ ແລະ ການກະເສດຂອງສະຫະປະຊາຊາດ (FAO), ອົງການ Deutsche Gesellschaft für Internationale Zusammenarbeit (GIZ), ໂຄງການຄຸ້ມຄອງທີ່ດິນພາກພື້ນແມ່ນ້ຳຂອງ (MRLG), ສູນສໍາລັບປະຊາຊົນ ແລະ ປ່າໄມ້ (RECOFTC), ອົງການອະນຸລັກສັດປ່າ (WCS) ແລະ ກອງທຶນສັດປ່າໂລກ (WWF).

ບົດສັງລວມຫຍໍ້ນີ້ຂຽນໂດຍ ທ່ານ Julian Derbidge, ທົບທວນ ແລະ ດັດແກ້ໂດຍ ທ່ານ ອາວະກາດ ພະສວຍໄຊງາມ, ທ່ານ Edwin Payuan, ທ່ານ ນາງ Natalie Y. Campbell, ທ່ານ ນາງ ມະໂນລີ ສີສະຫວັນ, ທ່ານ Richard L. Hackman, ທ່ານ ນາງ ວະນິດາ ຄວງວິຈິດ ແລະ ທ່ານ ວິລະເດດ ສີສຸລາດ.

**ການອ້າງອີງເຕັມ:** Derbidge, J. (2021). *Customary Tenure Rights in Lao PDR*, Briefing Note 2#. Vientiane: LIWG.

ຜົນງານນີ້ໄດ້ຮັບອະນຸຍາດພາຍໃຕ້ *Creative Commons Attribution-NonCommercial-ShareAlike 4.0 International (CC BY-NC-SA 4.0)*

**ການຈຳກັດຄວາມຮັບຜິດຊອບ**

LIWG ສະໜອງຂໍ້ມູນນີ້ ຄືດັ່ງເປັນການບໍລິການໃຫ້ສາທາລະນະ ເພື່ອຈຸດປະສົງດ້ານຂໍ້ມູນຂ່າວສານ ແລະ ການສຶກສາ, ໂດຍອີງໃສ່ຂໍ້ມູນທີ່ຜູ້ເຂົ້າຮ່ວມໃນກຸ່ມນີ້ເຫັນວ່າເປັນຂໍ້ມູນທີ່ເຊື່ອຖືໄດ້ ໂດຍບໍ່ມີສະຖານະທາງດ້ານກົດໝາຍໃດໆ. ຄວາມຄິດເຫັນທີ່ສະແດງອອກໃນບົດສັງລວມຫຍໍ້ສະບັບນີ້ແມ່ນໄດ້ມາຈາກຄວາມຄິດ ແລະ ການເຮັດວຽກຮ່ວມກັນຂອງທີມງານ ແລະ ຖືກຮັບຮອງໂດຍກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແຕ່ພຽງຜູ້ດຽວ.

ທັດສະນະ, ຄວາມຄິດເຫັນ ແລະ ການຕີຄວາມໝາຍທີ່ສະແດງອອກໃນສິ່ງພິມນີ້ ແມ່ນຂອງຜູ້ຂຽນ ແລະ ຜູ້ປະກອບສ່ວນ. ບໍ່ຄວນຖືກຕີຄວາມໝາຍວ່າເປັນທັດສະນະທາງການ ຫຼືບໍ່ເປັນທາງການ ຫຼືຈຸດຢືນຂອງ SDC, ເຢຍລະມັນ ແລະ ລັກເຊມເບີກ.

**ສະໜັບສະໜູນໂດຍ**

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

german cooperation
DEUTSCHE ZUSAMMENARBEIT

GRAND DUCHY OF LUXEMBOURG

Brot für die Welt